Lao Southern Baptist Fellowship

# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 1 ກໍຣະກົດ 2007 (7-01-2007)

---

## ຮ່ວມກັນເຮົາຢູ່

**ຂໍ້ພຣະຄັມພີໃນບົດຮຽນ:** ກິຈການ 2:42-47; 4:23-24, 29-35

**ພຣະຄັມພີແຫ່ງຄວາມຈິງ:** ບັນດາຜູ້ທີ່ເຊື່ອໄດ້ສະແດງຄວາມເປັນອັນນຶ່ງອັນດຽວກັນດ້ວຍການສົ່ງເສີມສນັບສນູນຊຶ່ງກັນແລະກັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ເຮັດສ່ວນຂອງທ່ານເພື່ອໃຫ້ໂບດເປັນໄປຕາມພຣະປະສົງຂອງພຣະເຈົ້າໂດຍ...

- ກະທຳໃນທາງທີ່ທ່ານສາມາດສນັບສນູນບັນດາຜູ້ທີ່ເຊື່ອດ້ວຍກັນ
- ປັບປຸງການສນັບສນູນຄວາມສາມັກຄີທັມກັບບັດດາຜູ້ທີ່ເຊື່ອດ້ວຍກັນ

## ບົດນຳ

"*ເຈົ້າຄິດບໍ່ວ່າໂບດເຮົາບໍ່ເປັນອັນນຶ່ງອັນດຽວກັນ?*" ເອດເວີດ ຖາມເມັຽຂອງລາວ. ຊາຣາ ຜູ້ເປັນເມັຽຖາມຄືນວ່າ "*ເຈົ້າຫມາຍເຖິງຫຽັງ?*" ຊາຣາຖາມຕໍ່ໄປອີກວ່າ "*ເຈົ້າໄດ້ຮັບໃນສິ່ງທີ່ເຈົ້າຕ້ອງການຢູ່ບໍ່?*" ຜູ້ເປັນຜົວຕອບວ່າ "*ໂອ ຂ້ອຍໄດ້ຮັບແທ້.*" ແລະຜົວຖາມຕໍ່ໄປວ່າ "*ມັນບໍ່ແມ່ນຈັ່ງຊັ້ນດອກ, ໂບດເຮົາໄດ້ຮັບໃຊ້ຊ່ວຍເຫລືອໃນຫລາຍສິ່ງທີ່ຄົນຕ້ອງການ, ລວມທັງຕົວຂ້ອຍນຳ. ແຕ່ວ່າເຮົາໄດ້ເສັຽຄວາມເປັນອັນນຶ່ງອັນດຽວກັນກັບຄົນອື່ນ ເພາະເຮົາມີແຕ່ຄິດຢາກໄດ້ໃນສິ່ງທີ່ເຮົາຕ້ອງການແມ່ນບໍ່?*" ອືມ... ຊາຣາຕອບຄືນວ່າ "*ອາດຊິເປັນແນນວນັ້ນ, ແຕ່ຂ້ອຍຄິດວ່າເຮົາ ເຮັດຫຽັງບໍ່ໄດ້ດອກກັບສິ່ງເຫລົ່ານີ້.*"

ທ່ານເດຄິດແນວໃດ? ເອດເວີ ເປັນຫ່ວງໃນສິ່ງທີ່ຖືກຕ້ອງຢູ່ບໍ່? ຊາຣາເດ ເວົ້າຖືກຢູ່ບໍ່? ບົດຮຽນນີ້ຈະຊ່ວຍທ່ານໃຫ້ເຂົ້າໃຈໃນພາກສ່ວນຂອງທ່ານໃນການຮັກສາຄວາມເປັນອັນນຶ່ງອັນດຽວກັນໃນໂບດຂອງທ່ານ.

## ສຶກສາພຣະຄັມພີ

### 1. ເປັນອັນນຶ່ງອັນດຽວກັນໃນການຮ່ວມສາມັກຄີທັມ: (ກິຈການ 2:42-47)

ເປັນຫຽັງໂບດໃນສມັຍນີ້ບໍ່ມີຄວາມຍິນດີ ທີ່ຈະເຫັນຄົນປະມານ 3000 ຄົນໄດ້ຮັບເຊື່ອແລະຮັບບັບຕິສະມາໃນມື້ດຽວ (ກິຈການ 2:41)? ເພາະເຫດໃດໂບດສມັຍເລີ້ມແຣກໃນກຸງເຢຣູຊາເລັມຈຶ່ງໄດ້ຮັບພຣະພອນຢ່າງຫລວງຫລາຍ? ເຮັດແນວໃດໂບດໃນສມັຍນີ້ຈຶ່ງຈະໄດ້ຮັບພຣະພອນເຫມືອນກັບໂບດສມັຍເລີ້ມແຣກ?

ໂບດສມັຍເລີ້ມແຣກໄດ້ຕັ້ງໃຈຢ່າງແທ້ຈິງໃນການນະມັສການ (ຂໍ້ທີ 42) ແລະເອົາໃຈໃສ່ຊຶ່ງກັນແລະກັນ (ຂໍ້ທີ 46). ເຂົາເຈົ້າມີຄວາມຊົມຊື່ນຍິນດີທີ່ພຣະເຈົ້າຊົງທຳງານຢູ່ຖ້າມກາງເຂົາເຈົ້າ.

ຖ້າຫາກສາມາດໃຊ້ຖ້ອຍຄຳດຽວບັນລະຍາຍເຖິງໂບດສມັບເລີ້ມແຣກໄດ້ໃນຂໍ້ພຣະຄຳທີ່ກ່າວມານັ້ນ ຖ້ອຍຄຳນັ້ນກໍແມ່ນ "**ຄວາມເປັນອັນນຶ່ງອັນດຽວກັນ.**" ຄວາມເປັນອັນນຶ່ງອັນດຽວກັນນີ້ບໍ່ໄດ້ເກີດຂຶ້ນມາເອງ ແຕ່ລະຄົນຕ້ອງຕັດສິນໃຈວ່າສິ່ງນີ້ແຫລະທີ່ເຂົາເຈົ້າຕ້ອງການແລ້ວກະທຳ ສິ່ງເຫລົ່ານັ້ນຈຶ່ງເກີດເປັນອັນນຶ່ງອັນດຽວກັນຂຶ້ນ. ບັນດາຜູ້ທີ່ເຊື່ອທຸກຄົນຕ້ອງມີສ່ວນຮ່ວມໃນການກະທຳນັ້ນ.

ຖ້ອຍຄຳທີ່ວ່າ **ອຸທິດຕົນ** (ຕັ້ງໝັ້ນຄົງ) ໄດ້ຊີ້ໃຫ້ເຫັນເຖິງການຕົກລົງໃຈໃນການກະທຳ. ບັນດາຜູ້ທີ່ເຊື່ອເຫລົ່ານີ້ໄດ້ຕົກລົງໃຈກັນທີ່ຈະ ຮຽນ, ກິນ, ແບ່ງປັນ ແລະອ້ອນວອນນຳກັນ (ຂໍ້ທີ 42). ພວກເຮົາມັກໃຊ້ຄຳວ່າ "**ການຮ່ວມສາມັກຄີທັມ**" ເມື່ອເວົ້າເຖິງໂບດໄດ້ຈັດແຈ່ງອາຫານເພື່ອກິນຮ່ວມກັນ ຫລືການເຕົ້າໂຮມກັນ. ຫລືບາງຄັ້ງກໍມີການກິນຕາມຫ້ອງໂຖງ. ເຖິງຢ່າງໃດກໍຕາມຄຳວ່າ **ຮ່ວມສາມັກຄີທັມ** ໝາຍເຖິງການຮ່ວມກັນ, ການແບ່ງປັນກັນ. ຜູ້ຊ່ຽວຊານທາງພຣະຄັມພີບໍ່ຖືວ່າ ການທັກເຂົ້າຈີ່ແມ່ນອາຫານສຳລັບຮ່ວມສາມັກຄີທັມ ຫລືສຳລັບສິນລະນຶກ ພຽງແຕ່ເປັນການກິນຮ່ວມກັນ. ຢ່າງໃດກໍຕາມ, ບັນດາຜູ້ທີ່ເຊື່ອເຫລົ່ານີ້ໄດ້ເຮັດຮ່ວມກັນບໍ່ພຽງແຕ່ການກິນເທົ່ານັ້ນ ເຂົາເຈົ້າມີຫລາຍສິ່ງທີ່ຄ້າຍຄືກັນ ເຂົາເຈົ້າເອົາໃຈໃສ່ເບິ່ງແຍງຊຶ່ງກັນແລະກັນ ເຂົາເຈົ້າຈຶ່ງມີຄວາມຊົມຊື່ນຍິນດີໃນຈິດໃຈ.

ການເປັນອັນນຶ່ງອັນດຽວກັນໃນໂບດ ຕ້ອງເລີ້ມຕົ້ນຈາກແຕ່ລະຄົນໃນການປັກຕາເບິ່ງພຣະເຈົ້າຢູ່ເບື້ອງເທິງ ແລະເບິ່ງອອກໄປທາງນອກຫາຄົນອື່ນ ເພື່ອຮ່ວມສາມັກຄີທັມ. ແຕ່ຖ້າຄວາມສົນໃຈໄດ້ອ່ວາຍໄປທາງອື່ນ ໂບດຈະມີຄວາມອ່ອນແອລົງ. ການເປັນອັນນຶ່ງອັນດຽວກັນຕ້ອງມີການເສັຽສລະໃນສິ່ງທີ່ຕົນມັກຫລືຄວາມສະດວກສະບາຍເພື່ອເຫັນແກ່ຄົນອື່ນ. ການເປັນອັນນຶ່ງອັນດຽວກັນຕ້ອງມີສ່ວນໃນການເປັນຫ່ວງຄົນອື່ນ, ອະທິຖານເພື່ອຄົນອື່ນ, ແລະຮັບໃຊ້ຄົນອື່ນ.

ຄວາມສາມັກຄີທັມຕາມຂໍ້ພຣະຄັມພີນີ້ໝາຍເຖິງມີໃຈກວ້າງຂວາງແທນທີ່ຈະເຫັນແກ່ຜົນປໂຍດຂອງຕົນແຕ່ຝ່າຍດຽວ. ແຕ່ລະຄົນຈະບໍ່ຄິດເຖິງແຕ່ຄວາມຕ້ອງການຂອງຕົນ ແຕ່ໃຫ້ຄິດເຖິງຄວາມຕ້ອງການຂອງຄົນອື່ນນຳ. ທຸກຄົນເກີດຄວາມຢ້ານຢຳນັບຖື ເມື່ອເຫັນຄວາມອັສຈັນເກີດຂຶ້ນຖ້າມກາງຜູ້ທີ່ເຊື່ອໃນສມັຍນັ້ນ (ຂໍ້ທີ 43) ການອັສຈັນໄດ້ກາຍເປັນພຍານວ່າອົງພຣະຜູ້ເປັນເຈົ້າຊົງສະຖິດຢູ່ນຳໄພ່ພົນຂອງພຣະອົງ ແມ່ນແຕ່ຄົນທີ່ບໍ່ເຊື່ອກໍເກີດຄວາມເພິ່ງພໍໃຈໃນສິ່ງທີ່ເຂົາເຈົ້າໄດ້ເຫັນ (ຂໍ້ທີ 47) ເມື່ອບັນຜູ້ທີ່ເຊື່ອມີການນະມັສການແລະຮັບໃຊ້ຊ່ອຍເຫລືອໂດຍຄວາມເປັນອັນນຶ່ງອັນດຽວກັນ ຄົນທັງຫລາຍຈະດູດດຶງມາຫາພຣະເຈົ້າ ພຣະເຈົ້າຈະຊົງເພີ້ມເຕີມແລະອວຍພຣະພອນໃຫ້ (ຂໍ້ທີ 47).

## ២. <u>ເປັນອັນນຶ່ງອັນດຽວກັນໃນການອ້ອນວອນ:</u> (ກິຈການ 4:23-24, 29-31)

ທ່ານລູກາໄດ້ຍົກຕົວຢ່າງຄວາມເປັນອັນນຶ່ງອັນດຽວກັນແບບເໜືອທັມມະຊາດ. ທ່ານເປໂຕແລະໂຢຮັນໄດ້ເຂົ້າໄປຍັງບໍຣິເວນພຣະວິຫານໃນຍາມເວລາອ້ອນວອນ ມີຄົນງ່ອຍມາແຕ່ເກີດຜູ້ນຶ່ງໄດ້ມາຂໍທານ. ໃນພຣະນາມແລະດ້ວຍຣິດເດດຂອງອົງພຣະເຢຊູຄຣິດ ທ່ານເປໂຕໄດ້ໂຜດຄົນງ່ອຍຜູ້ນັ້ນໃຫ້ຫາຍດີ. ( ກິຈການ 3:1-7)

ການປິ່ນພະຍາດຄັ້ງນີ້ສົ່ງຜົນໃຫ້ເປໂຕມີໂອກາດໄດ້ປະກາດຂ່າວປະເສີດ. ພວກຜູ້ນຳສາສນາໄດ້ຈັບຄຸມເປໂຕແລະໂຢຮັນໄວ້. (ກິຈການ 4:3) ຕໍ່ມາໄດ້ເຫັນວ່າ ບໍ່ມີເຫດຜົນອັນໃດທີ່ຈະກັກຂັງທັງສອງຄົນນີ້ໄວ້ ຈຶ່ງໄດ້ປ່ອຍທ່ານທັງສອງໄປ ແລະໄດ້ເຕືອນວ່າບໍ່ໃຫ້ສັ່ງສອນຫລືປະກາດໃນພຣະນາມພຣະເຢຊູອີກເປັນອັນຂາດ ( ຂໍ້ 18, 21)

ຫລັງຈາກເປໂຕແລະໂຢຮັນໄດ້ຖືກປົດປ່ອຍແລ້ວ ພວກເພິ່ນກໍມີການຮ່ວມສາມັກຄີທັມ ເພື່ອລາຍງານເຖິງສິ່ງທີ່ເກີດຂຶ້ນກັບພວກເພິ່ນ. ບັນດາຜູ້ທີ່ເຊື່ອທັງຫລາຍກໍກ່າວຄຳສັຣເສີນພຣະເຈົ້າ. ເຂົາເຈົ້າໄດ້ສັຣເສີນພຣະເຈົ້າແລະທູນຂໍຄວາມກ້າຫານໃນການປະກາດຂ່າວປະເສີດ. ພຣະເຈົ້າຊົງເອົາພຣະທັຍໃສ່ພິເສດຕໍ່ຄຣິສຕະຈັກທີ່ມີການອ້ອນວອນແລະຮ່ວມສັກມັກຄີທັມຊຶ່ງກັນແລະກັນ. ການອ້ອນວອນເປັນຈຸດສູນກາງຂອງບັນດາຜູ້ທີ່ເຊື່ອໃນຍຸກແຮກ. ທ່ານລູກາໄດ້ບັນທຶກໄວ້ວ່າ ຫລັງຈາກພຣະເຢຊະສະເດັດກັບຄືນໄປສວັນແລ້ວ ບັນດາຜູ້ຕິດຕາມພຣະອົງໄດ້ເປັນອັນນຶ່ງອັນດຽວກັນໃນການອ້ອນວອນຢ່າງບໍ່ຂາດ ( ກິຈການ 1:4) ພຣະເຈົ້າຊົງກ່າວຜ່ານທາງຜູ້ປະກາດພຣະທັມເອຊາຢາວ່າ "ວິຫານຂອງເຮົາຈະມີຊື່ວ່າວິຫານແຫ່ງການອ້ອນວອນສຳລັບຄົນທຸກຊາດ" ( ອຊຢ 56:7) ພຣະເຢຊູຊົງກ່າວຖ້ອຍຄຳດຽວກັນນີ້ຕໍ່ບັນດາພວກຊື້ຂາຍກ່ອນທີ່ພຣະອົງຈະໄລ່ພວກເຂົາອອກຈາກພຣະວິຫານ (ລູກາ 19:48)

ໂບດຈະເປັນອັນນຶ່ງອັນດຽວກັນໄດ້ເມື່ອເອົາການອ້ອນວອນເປັນຈຸດສູນກາງ. ການອ້ອນວອນໃນຍາມສາມັກຄີທັມຄວນແນຈຸດສູນກາງໃສ່ສິ່ງທີ່ສຳຄັນເປັນນຶ່ງໃນຊີວິດ. ເປັນການສຳຄັນຫລາຍໃນການອ້ອນວອນເພື່ອບັນຜູ້ເຈັບໄຂ້ຫລືນອນໂຮງໝໍ ສິ່ງເຫລົ່ານີ້ຄວນເອົາໃຈໃສ່ໃນການອ້ອນວອນຂອງພວກເຮົາ. ສິ່ງທີ່ເຮົາເປັນຫ່ວງທີ່ສຸດນັ້ນຄວນຈະເປັນເຣື່ອງຊີວິດດ້ານຈິດວິນຍານຂອງຄົນອື່ນ.

ພວກເຮົາກໍເຊັ່ນດຽວກັນ ຄວນຈະມີຄວາມກ້າຫານທີ່ຈະປະກາດຂ່າວປະເສີດກັບຄົນທີ່ຢູ່ອ້ອມຂ້າງເຮົາ. ບັນດາຜູ້ທີ່ເຊື່ອໃນສມັຍເລີ້ມແຣກບໍ່ໄດ້ທູນຂໍໃຫ້ພຣະເຈົ້າຊ່ອຍເຂົາເຈົ້າໃຫ້ພົ້ນຈາກຄວາມຍາກລຳບາກ ແຕ່ເຂົາເຈົ້າອ້ອນວອນດັ່ງທີ່ພຣະເຢຊູໄດ້ກະທຳ ຊຶ່ງພຣະອົງໄດ້ທູນຕໍ່ພຣະບິດາວ່າ *"ຂ້ານ້ອຍບໍ່ໄດ້ອ້ອນວອນໃຫ້ພຣະອົງເອົາເຂົາເຈົ້າອອກໄປຈາກໂລກນີ້ ແຕ່ຂໍຊົງໂຜດຊ່ອຍເຂົາໃຫ້ພົ້ນຈາກຄວາມຊົ່ວຮ້າຍທັງປວງ"* ( ໂຢຮັນ 17:15)

ບັນດາຜູ້ເຊື່ອໃນຍຸກເລີ້ມແຣກ ໄດ້ມີພາຣະໃຈທີ່ຢາກໃຫ້ຄົນອື່ນໄດ້ມາຮູ້ຈັກກັບພຣະເຢຊູ. ເຂົາເຈົ້າຮູ້ດີວ່າມັນບໍ່ແມ່ນສິ່ງງ່າຍໃນການປະກາດຂ່າວປະເສີດ. ແທນທີ່ເຂົາເຈົ້າຈະເອົາໃຈຈົດຈໍ່ໃສ່ຄວາມຫຍຸ້ງຍາກໃນການສັ່ງສອນຄົນອື່ນ ແຕ່ເຂົາເຈົ້າຜັດອ້ອນວອນໃຫ້ມີຄວາມກ້າຫານ ແທນ.

ບັນດາຜູ້ທີ່ເຊື່ອໃນໂບດແຫ່ງນັ້ນບໍ່ໄດ້ອ້ອນວອນແບບເຫັນແກ່ຕົວ. ພຣະຄັມພີໄດ້ເຕືອນສະຕິພວກເຮົາວ່າ ພຣະເຈົ້າບໍ່ຊົງຕອບຄຳອ້ອນວອນທີ່ເຫັນແກ່ຕົວ (ຢາໂກໂບ 4:3) ຢ່າງໃດກໍຕາມ, ການເອົາໃຈໃສ່, ບໍ່ເຫັນແກ່ຕົວໃນການອ້ອນວອນດ້ວຍການແນໃສ່ໃນສິ່ງທີ່ເຫາະສົມ ຈະເກີດຜົນທາງຈິດວິນຍານຢ່າງອັສຈັນ. ພຣະເຈົ້າຊົງຕອບຄຳອ້ອນວອນຂອງເຂົາເຈົ້າ ໃນຂະນະທີ່ເຂົາເຈົ້າເຕັມລົ້ນດ້ວຍພຣະວິນຍານບໍຣິສຸດແລະພາກັນເລີ້ມກ່າວຂ່າວປະເສີດຂອງພຣະເຈົ້າຢ່າງກ້າຫານ. ການເຕັມລົ້ນນີ້ແມ່ນການຊົງສະຖິດຢູ່ນຳຂອງພຣະວິນຍານບໍຣິສຸດແລະພະລັງຂອງພຣະອົງ.

ພຣະເຈົ້າຊົງເຄື່ອນໄຫວແລະທຳງານຖ້າມກາງບັນດາຜູ້ທີ່ເຊື່ອ ເມື່ອເຂົາເຈົ້າສັຣເສີນພຣະອົງແລະອ້ອນວອນຂໍຄວາມກ້າຫານໃນການເປັນພະຍານ ການອ້ອນວອນດັ່ງກ່າວນີ້ແມ່ນສິ່ງຈຳເປັນທີ່ຄຣິສຕຽນທຸກຄົນຄວນກະທຳ.

**3. <u>ເປັນອັນນຶ່ງອັນດຽວກັນເພື່ອຊ່ອຍເຫລືອຄົນອື່ນ:</u>** (ກິຈການ 4:32-35)

ໃນຂໍ້ພຣະຄຳດັ່ງກ່າວນີ້ເຮົາໄດ້ເຫັນພາບພົດອັນຈົບງາມຂອງຄວາມເປັນອັນນຶ່ງອັນດຽວກັນ ເມື່ອບັນດາຜູ້ເຊື່ອໄດ້ເປັນນ້ຳນຶ່ງໃຈດຽວກັນ, ມີໃຈກວ້າງຂວາງບໍ່ເຫັນແກ່ຕົວ. ການກະທຳຂອງໂບດໃນຍຸກແຣກໂບດນີ້ໄດ້ເຕັມລົ້ນໄປດ້ວຍຄວາມເປັນຫ່ວງຊຶ່ງກັນແລະກັນ. ຄວາມເປັນຫ່ວງດັ່ງກ່າວນີ້ໄດ້ຂຍາຍອອກກວ້າງໄກກວ່າຄວາມເປັນເພື່ອນມິດກັນແບບທັມມະດາ. ໂບດທີ່ມີພຣະຄຸນອັນຍິ່ງໃຫຍ່ແມ່ນໂບດທີ່ພຣະຄຸນຂອງພຣະເຈົ້າໄດ້ສະແດງອອກຢ່າງເຫັນໄດ້ຊັດແຈ້ງໃນຊີວິດຂອງບັນດາຜູ້ທີ່ເຊື່ອ.

ຄິດເບິ່ງວ່າຄົນເຫລົ່ານັ້ນໄດ້ຂາຍເຮືອນແລະດິນເພື່ອຊ່ອຍເຫລືອບັນດາຜູ້ທີ່ທຸກຍາກຂາດເຂີນ. ຄວາມເປັນອັນນຶ່ງອັນດຽວກັນແມ່ນການບໍ່ເຫັນແກ່ຕົວແຕ່ເຫັນແກ່ຄົນອື່ນ. ເຮົາສາມາດເຫັນຄວາມເປັນອັນນຶ່ງອັນດຽວກັບແບບນີ້ບໍໃນສມັຍນີ້?

ພວກເຮົາໄດ້ຮັບພຣະພອນດ້ານຊັບສິ່ງຂອງຢ່າງຫລວງຫລາຍ ດັ່ງນັ້ນເຮົາສາມາດຖວາຍພຣະກຽດແລະສັຣເສີນພຣະເຈົ້າດ້ວຍການໃຊ້ສິ່ງຂອງເຫລົ່ານີ້ຢ່າງເຫມາະສົມ. ພຣະເຈົ້າຊົງອວຍພຣະພອນພວກເຮົາເມື່ອພວກເປັນອັນນຶ່ງອັນດຽວກັນເພື່ອສນອງຄວາມຈຳເປັນຂາດເຂີນຂອງຄົນອື່ນໃນໂບດ ບໍ່ພຽງແຕ່ຄົນໃດຄົນນຶ່ງທີ່ເຮົາເພິ່ງພໍໃຈເທົ່ານັ້ນ. ເມື່ອພວກເຮົາສແວງຫາການຊົງນຳຂອງພຣະເຈົ້າໃນຊີວິດຂອງເຮົາ, ພຣະອົງຈະຊົງນຳພາເຮົາໃຫ້ຮັບໃຊ້ຊ່ອຍເຫລືອຄົນທັງຫລາຍທີ່ຢູ່ອ້ອມຮອບເຮົາຢ່າງແນ່ນອນ. ເມື່ອເຮົາຮັກຄົນອື່ນຫລາຍກວ່າຊັບສິ່ງຂອງ ເຮົາກໍຈະໃຊ້ພຣະພອນຂອງພຣະເຈົ້າເພື່ອໃຫ້ຄົນອື່ນໄດ້ຮັບຜົນປໂຍດນຳ. ອຸປສັກອັນໃຫຍ່ຫລວງທີ່ເຮັດໃຫ້ຄົນອື່ນບໍ່ເຫັນພຣະຄຣິດໃນທຸກວັນນີ້ ແມ່ນການແຕກແຍກໃນຫລາຍໆ ໂບດທີ່ສະມາຊິກມີສ່ວນຮ່ວມໃນການຮັບໃຊ້ໃນກຸ່ມຕ່າງໆ ທີ່ແຕກຕ່າງກັນ. ພຣະຄັມພີກ່າວວ່າຕົ້ນເຫດຂອງການແຕກແຍກໃນໂບດນັ້ນແມ່ນໂລພະຕັນຫາສ່ວນຕົວຂອງເຮົາເອງ(ຢາໂກໂບ 4:1-3) ການແຕກແຍກກັນໃນໂບດສົ່ງຜົນໃຫ້ສະມາຊິກຂາດຄວາມຊົມຊື່ນຍິນດີໃນການນະມັສການ. ການແຕກແຍກເປັນສິ່ງກີດຂວາງບໍ່ໃຫ້ເຮົາເຫັນເຖິງຄວາມຈຳເປັນທີ່ຈະນຳຄົນທັງຫລາຍມາຫາພຣະເຢຊູ. ຄວາມຕ້ອງການທີ່ຈຳເປັນຂອງຄົນອື່ນບໍ່ໄດ້ຮັບການຕອບສນອງ.

ແຕ່ລະຄົນສາມາດທີ່ຈະຊ່ອຍໃຫ້ມີຄວາມເປັນອັນນຶ່ງອັນດຽວກັນພາຍໃນໂບດ ດ້ວຍການປະຖິ້ມຄຳວ່າ **"ຖ້າຂ້ອຍບໍ່ມັກ ສິ່ງນັ້ນກໍຈະຕ້ອງບໍ່ດີ"** ນີ້ເສັຽ. ມີບາງສິ່ງເຮົາອາດຈະບໍ່ມັກ ແຕ່ສິ່ງນັ້ນອາດຈະເກີດຜົນດີຕໍ່ອີກຄົນນຶ່ງທີ່ຢູ່ທາງຂ້າງເຮົາ. ໂບດໃນສມັຍເລີ້ມແຣກໄດ້ຮັບພຣະພອນດ້ວຍການປະກາດຂ່າວປະເສີດ, ດ້ວຍການເຫັນຫ່ວງຄົນອື່ນ,

ແລະດ້ວຍການສແວງຫາສິ່ງທີ່ສາມາດເຮັດຮ່ວມກັນໄດ້; ນີ້ແມ່ນທີ່ມາຂອງພຣະພອນສໍາລັບໂບດໃນສມັຍປັດຈຸບັນນີ້.

## ບົດຮຽນຊີວິດ

ພຣະເຈົ້າຊົງປະທານຄວາມສາມາດແລະຄວາມສົນໃຈໃຫ້ຜູ້ເຊື່ອທັງຫມົດແຕກຕ່າງກັນ ພວກເຮົາບໍ່ຄວນເປັນຜູ້ບໍຣິໂພກ (ຜູ້ກິນ, ຜູ້ໃຊ້) ພຽງເທົ່ານັ້ນ. ພຣະເຈົ້າຊົງຮຽກເອີ້ນພວກເຮົາໃຫ້ເປັນຜູ້ຮັບໃຊ້ພຣະອົງແລະຄົນອື່ນດ້ວຍພຣະພອນທີ່ພຣະອົງຊົງປະທານໃຫ້. ໂບດຈະເຂັ້ມແຂງ, ພຣະເຈົ້າຈະໄດ້ຮັບກຽດ ກໍຕໍ່ເມື່ອຜູ້ທີ່ເຊື່ອແຕ່ລະຄົນໄດ້ຮັບໃຊ້ດ້ວຍຄວາມເປັນອັນນຶ່ງອັນດຽວກັນກັບຜູ້ທີ່ເຊື່ອອື່ນໆ.

ພວກເຮົາຄວນສືບຕໍ່ເພື່ອຊ່ອຍໂບດຂອງເຮົາໃຫ້ເປັນອັນນຶ່ງອັນດຽວກັນ. ພວກເຮົາສາມາດເຮັດໄດ້ດ້ວຍການຕອບຄໍາຖາມດັ່ງຕໍ່ໄປນີ້:

- ຂ້າພະເຈົ້າຈະເຮັດແນວໃດເພື່ອຊ່ອຍໂບດຂອງຂ້າພະເຈົ້າໃຫ້ເປັນອັນນຶ່ງອັນດຽວກັນໃນການສາມັກຄີທັມ?
- ຂ້າພະເຈົ້າຈະເຮັດແນວໃດເພື່ອຊ່ອຍໂບດຂອງຂ້າພະເຈົ້າໃຫ້ເປັນອັນນຶ່ງອັນດຽວກັນໃນການອະທິຖານ?
- ຂ້າພະເຈົ້າຈະເຮັດແນວໃດເພື່ອຊ່ອຍໂບດຂອງຂ້າພະເຈົ້າໃຫ້ເປັນອັນນຶ່ງອັນດຽວກັນໃນການຊ່ວຍເຫລືອຄົນອື່ນ?

ໂດຍການປັບປຸງຄວາມສັມພັນອັນດີກັບຜູ້ທີ່ເຊື່ອອື່ນໆ ເຮົາສາມາດມີຄວາມເປັນອັນນຶ່ງອັນດຽວກັນໄດ້ໃນໂບດຂອງເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PS